

ນິໄສ (ຮູບພາບ © *J.S. Strijk, www.asianfagaceae.com*).

SCIENTIFIC NAME: *Lithocarpus annamensis* (Hickel & A.Camus) Barnett

ຊື່ພື້ນບ້ານ: **Kor fa** (Laos)
**ກໍ່ຝາ** (Lao alphabetic)
**Dẻ trung bộ;**
**Sồi đá trung bộ** (Vietnam)

FAMILY: Fagaceae

**Joeri S. Strijk** *(Alliance for Conservation Tree Genomics ACTG)*
**Karina Orozco & Amy Byrne** *(The Morton Arboretum)*

## ຄຳອະທິບາຍທາງດ້ານພຶດສາດ

**ຕົ້ນໄມ້ໃຫຍ່,** ສູງຕັ້ງແຕ່ **25–30** ແມັດ. ລຳຕົ້ນໃຫຍ່ ແລະ ເປັນຮ່ອງ. **ເປືອກ** ກ່ອນອື່ນເປັນເກັດມີຂົນສີຂາວໆ, ຫຼັງຈາກນັ້ນຈະເປັນສີນ້ຳຕານ ແລະ ກ້ຽງ, ໜາ ແລະ ມີຮອຍແຕກ. **ຕາຍອດ** ຮູບໄຂ່ ຫາ ຮູບກົມ, ມີເກັດຮຸບໄຂ່ປາຍປູ້ເລັກໜ້ອຍ.

**ໃບ** ໜາ, ຮູບໄຂ່ ປີ້ນ-ຮູບຫອກ, ຮຽວແຫຼມ. ປາຍໃບແຫຼມສະຫຼຽງ, ກົກໃບຮຽວແຫຼມ-ຮູບຫຼິ້ມ. ແຜ່ນໃບຍາວ **13–20** ຊັງຕີແມັດ ແລະ ກວ້າງ **5–11** ຊັງຕີແມັດ, ຜິວຄ້າງໜັງ. ໜ້າໃບ ກ້ຽງ ແລະ ມັນເຫງົາ, ຫຼັງໃບມີເກັດສີຂາວເລັກໜ້ອຍ, ຂອບໃບລຽບ, ປາຍໃບບາງຄັ້ງເປັນຄື້ນ ຫຍັກເລັກໜ້ອຍ, ເສັ້ນກາງໃບເຫັນໄດ້ເດັ່ນຊັດທັງສອງດ້ານ. **ເສັ້ນໃບດ້ານຂ້າງ 10–12** ຄູ່, ຮຽງຂະ ໜານກັນ, ໂຄ້ງຂຶ້ນດ້ານເທິງ, ຍື່ນອອກມາດ້ານລຸ່ມເລັກໜ້ອຍ, ເສັ້ນໃບທາງກາງເປັນມູມ **55** ອົງສາກັບເສັ້ນກາງໃບ, ເສັ້ນໃບສຳຮອງບໍ່ແຈ້ງ. **ກ້ານໃບ** ຍາວ **1–2** ຊັງຕີແມັດ.

## ການກະຈາຍພັນ:

**ລາວ, ຫວຽດນາມ.**
ເກີດໃນປະເພດດິນຊາຍ, ແລະ ດິນແດງທີ່ອຸດົມສົມບຸນ. ພົບໄດ້ແຕ່ ລະຫວ້າງ 300–1100 ແມັດຈາກລະດັບໜ້ານ້ຳທະເລ.





ສາຂາ: ໃບເທິງ , ໃບລຸ່ມ (ຮູບພາບ © *J.S. Strijk, www.asianfagaceae.com*).

## ສະຖານະພາບຄວາມສ່ຽງ:

**EN** **ໃກ້ຈະສູນພັນ (Endangered).**

**ຊໍ່ດອກແມ່ຊີງກະບອກຮຽວນ້ອຍ** ອອກເປັນຊໍ່ດອກເຊື່ອມຕິດກັນເປັນຈຸ້ມລະ **3** ດອກ, ກ້ານເກສອນແມ່ **3,** ຂ້ອນຂ້າງ ຍາວ ແລະ ອິດສະລະ.



ໝາກໄມ້ແກ່ (ສີດ) (ຮູບພາບ © *H.T. Son).*



ພຶດລິ້ມລູກ ແລະ ໝາກໄມ້ (ຮູບພາບ © *J.S. Strijk, www.asianfagaceae.com).*



ເປືອກຕົ້ນໄມ້ (ຮູບພາບ © *J.S. Strijk, www.asianfagaceae.com).*

**ຊໍ່ໝາກ** ແບບແກນມີດອກ ແມ່ຢູ່ດ້ານລຸ່ມ ແລະ ດອກຜູ້ຢູ່ປາຍຊໍ່. ຍາວ **8–15** ຊັງຕີແມັດ, ໜາແໜ້ນ ແລະ ໜາ, ໂດຍດ້ານປາຍຈະໜາກວ່າດ້ານກົກເລັກໜ້ອຍ, ມີຮອຍແຕກ ເລັກໜ້ອຍຍົກເວັ້ນດ້ານກົກ. **ໝາກ** ຮຽງກັນເໜັ້ນ, ແກ່ທຸກໆ **02** ປີ. **ກາບຫຸ້ມໝາກ (ຮູບຖ້ວຍ)** ເຊື່ອມຕິດກັນຢູ່ດ້ານລຸ່ມ, ຊຸດລະ **3** ຖ້ວຍນ້ອຍໆ, ບໍ່ມີກ້ານ, ສ່ວນຫຼາຍຈະແປ, ສູງປະມານ **1/4–1/6** ຂອງໝາກ, ບໍ່ກວ້າງຫຼາຍ, ມີເສັ້ນຜ່າສູນກາງ **14–15** ມິນລິແມັດ, ມີເກັດນ້ອຍໆເປັນຮູບໄຂ່ ປາຍແຫຼມບໍ່ເດັ່ນຊັດປານໃດ, ມີຂົນສີຂາວ. ໝາກຍື່ນອອກມາຫຼາຍ, ຄ້າຍໃບພັດ, ກວ້າງກວ່າກາບຫຸ້ມໝາກ(ຮູບຖ້ວຍ) ຫຼາຍ, ລວງຍາວຈະໜ້ອຍກວ່າລວງ ກວ້າງ, ຍາວ **10–13** ມິນລິແມັດ, ກວ້າງ **17–22** ມິນລິແມັດ. **ປາຍໝາກ** ຮູບຕັດ ຫາ ເປັນຕິ່ງນ້ອຍໆ, ປົກຫຸ້ມດ້ວຍຂົນສັ້ນໜາໆ ສີຂາວ ຫຼື ເທົາ. ເປືອກບໍ່ມີຊ່ອງຫວ່າງ ຫຼື ພະໜັງກັ້ນ. **ຮອຍ** ມີຮອຍຫຼຸບເສັ້ນຜ່າສູນກາງ **7–9** ມິນລິແມັດ.

## ຄໍາແນະນໍາໃນການເກັບໝາກ (ແກ່ນ) ສໍາລັບກ້າແນວພັນໃນເຮືອນຫົ່ມ

ເມື່ອໝາກແກ່, ໃຫ້ເກັບແກ່ນໂດຍກົງຈາກຕົ້ນ ໂດຍການສັ່ນງ່າ ຫຼື ແມ້ນໂດຍໄມ້ສ້າວ. ເນື່ອງຈາກອັດຕາການຫງອກ ຂອງແກ່ນ ແມ່ນຈະຫຼຸດລົງໄວຫຼັງຈາກທີ່ຕົກລົງພື້ນດິນ ແລະ ມີຄວາມສ່ຽງທີ່ຈະຖືກທໍາລາຍໂດຍສັດ ແລະ ແມງໄມ້ ດັ່ງ ນັ້ນຄວນເກັບໂດຍກົງຈາກຕົ້ນດີກວ່າເກັບຈາກພື້ນດິນ. ຖ້າແກ່ນບໍ່ມີຫຼາຍ, ກໍ່ສາມາດນໍາເອົາຊໍ່ໝາກ ແລະ ແກ່ນທີ່ຕົກຕາມ ພື້ນດິນມາໃຊ້ຂະຫຍາຍພັນ ຢູ່ເຮືອນຫົ່ມໄດ້.

ບໍ່ຄວນປອກເປືອກໜາມ ຂອງໝາກ ແລະ ຊໍ່ໝາກ (ບໍ່ເອົາສ່ວນທີ່ມີໜາມກາບຫຸ້ມໝາກ (ຮູບຖ້ວຍ)ອອກ ເພື່ອ ໃຫ້ເຫັນແກ່ນທາງໃນ). ການປອກເປືອກເພື່ອໃຫ້ເຫັນແກ່ນທາງໃນຈະເຮັດໃຫ້ມີຄວາມສ່ຽງ ຕໍ່ການຖືກທໍາລາຍຈາກແມງໄມ້ ແລະ ແຫ້ງໃນລະຫວ່າງການຂົນສົ່ງ, ແລະ ການເກັບຮັກສາ, ແລະ ເຮັດໃຫ້ການລະບຸຈັດຈໍາແນກແນວພັນມີຄວາມຍຸ້ງຍາກ. ບໍ່ຄວນ “ປອກເປືອກ” ຊໍ່ໝາກເພື່ອແຍກໝາກອອກມາເປັນແຕ່ລະ ໝາກ. ກຸ່ມ ຂອງຕົ້ນ ກໍ່ຊະນິດນີ້, ຈະອອກໝາກໃກ້ໆກັນສາມາດເກັບຕົວຢ່າງແກ່ນແນວພັນເປັນ “ປະຊາກອນທ້ອງຖິ່ນ” ແລະ ສາມາດເກັບຮວບຮວມໃນຖົງອັນດຽວກັນໄດ້. ແກ່ນທີ່ເກັບຈາກຕົ້ນທີ່ ຫ່າງກັນການ 100–150 ແມັດ ບໍ່ຄວນນໍາມາປົນກັນ, ຕ້ອງແຍກ ເກັບໃນຖົງທີ່ຕ່າງກັນ. ຫາກມີຄວາມເປັນໄປໄດ້ຄວນເກັບກໍາຂໍ້ມູນທາງດ້ານພູມສາດສໍາລັບ “ປະຊາກອນທ້ອງຖິ່ນ” ແລະ ແຕ່ລະຖົງທີ່ເກັບຈາກປະຊາ ກອນເຫຼົ່ານັ້ນຈະຕ້ອງລະບຸຂໍ້ມູນລະອຽດ ເຊັ່ນດຽວກັນ. ການເກັບກິ່ງກ້ານນ້ອຍໆ ແລະ ໃບຈາກຕົ້ນທີ່ເກັບໝາກໃສ່ໃນຖົງທີ່ເກັບຕົວຢ່າງນໍາຍິ່ງເປັນ ການດີເພື່ອຊ່ວຍໃນການລະບຸຊະນິດ.

## ອອກດອກ-ໝາກ:

**ອອກດອກເດືອນ:**
ກັນຍາ-ທັນວາ.

**ໝາກ:**
ເດືອນ ມິຖຸນາ-ຕຸລາ.

**ການຂະຫຍາຍພັນ:**
ໂດຍສັດກັດແທະ
(ກະຫອກ, ໝູ, ໝູນ້ອຍ?).

**ຄວາມຕ້ອງການແສງ ຫຼື ຂໍ້ມູນທາງລະບົບນິເວດວິທະຍາ:**
ຍັງຕ້ອງສຶກສາຢັ້ງຢືນ.

## ການນໍາໃຊ້:

ໝາກກິນໄດ້.

ຂໍ້ຄວາມນີ້ເປັນຂອງຜູ້ຂຽນ. ການແຜ່ພັນບາງສ່ວນ ຫຼືທັງໝົດຂອງວຽກງານນີ້, ແລະການແປຂອງມັນຖືກຫ້າມໂດຍບໍ່ໄດ້ຮັບອະນຸຍາດຈາກສະຖາບັນການພິມເຜີຍແຜ່.

**ຂໍ້ມູນອອນລາຍ:**
https://www.asianfagaceae.com/lithocarpus/Lithocarpus_annamensis/